ຂະບວນການລາວເພື່ອສິດທິມະນຸດ
LAO MOVEMENT FOR HUMAN RIGHTS
MOUVEMENT LAO POUR LES DROITS DE L'HOMME

# ຖະແຫລງການ ສາກົນ
# ວ່າດ້ວຍ ສິດທິມະນຸດ

ຂອງການ ສະຫະປະຊາຊາດ

ປະກາດໃຊ້ເມື່ອ

ວັນທີ 10 ທັນວາ 1948

***

ຖແລງການ ສາກົນ

ວ່າດ້ວຍ ສິດທິມະນຸດ

ອົງການ ສະຫະປະຊາຊາດ

ປະກາດໃຊ້ເມື່ອ

ວັນທີ 10 ທັນວາ 1948

***

ແຜ່ນດິນລາວ ເປັນຂອງ

ຄົນລາວ  ທຸກເຜົ່າພັນ

*

ປະເທດຊາດລາວ

ເປັນມໍຣະດົກ ອັນ ສັກກະລະບູຊາ

ຂອງປະຊາຊົນລາວ  ທຸກເຜົ່າພັນ

*

ແຜ່ນດິນລາວ

ແລະ ປະເທດຊາດລາວ

ຕ້ອງໝັ້ນຄົງ

ທະນົງກຽດ ຕລອດ ການລະນານ

**

<u>ຄຳນຳ</u>

ຄູ່ມືກ່ຽວກັບປະກາດສາກົນ ວ່າດ້ວຍ ສິດທິມະນຸດ ສະບັບນີ້ ໄດ້ຈັດທຳຂຶ້ນ ກໍ່ຍ້ອນມີຈຸດປະສົງ ຢາກໃຫ້ ພີ່ນ້ອງ ລາວ ເພື່ອນຮ່ວມຊາດ ຊາບ ຢ່າງກວ້າງຂວາງ ເຖິງບັນດາສິດ ພື້ນຖານ ຂອງມວນມະນຸດ ທີ່ຄວນຈະຕ້ອງໄດ້ຮັບ ການປະຕິບັດ ຢ່າງຖືກຕ້ອງ ເນື້ອໃນຈິດໃຈຂອງຄູ່ມືສະບັບນີ້ ໄດ້ຖືກແປ ອອກຈາກຕົ້ນສະບັບ ທີ່ເປັນພາສາ ຝຼັ່ງເສດ ຊຶ່ງຖືເປັນພາສາຣັຖການ ຣະຫວ່າງຊາດ ໃນການ ປະກາດໃຊ້ຢ່າງເປັນທາງການ ຈາກອົງການ ສະຫະປະຊາຊາດ ເມື່ອວັນທີ 10 ທັນວາ 1948 ທີ່ ສຳນັກງານໃຫຍ່ ສະຫະປະຊາຊາດ ນະຄອນ ນິວຢ໊ອກ ສະຫະຣັດ ອາເມຣິກາ.

ເຊັ່ນດຽວກັນ. ບັນດາສິດທິຂອງເດັກ ອັນໄດ້ແກ່ສິດໃນ ການ ຮັບປະກັນ ທັງໃນການ ຊ່ວຍໃຫ້ເດັກ ທີ່ກຳເນີດ ອອກມາ ໂດຍປາສຈາກ ການແບ່ງແຍກ ແລະ ກີດກັນ ເຊື້ອຊາດ. ຜິວ. ເພດ. ແລະ

ສາສນາ ຫຼື ຄວາມຄິດຄວາມເຫັນທາງການເມືອງ ເດັກຈະຕ້ອງໄດ້ຮັບການພິທັກ ແລະຄຸ້ມຄອງ ເປັນພິເສດ ເພື່ອຊ່ວຍໃຫ້ເດັກສາມາດພັດທະນາ ທາງກາຍ ທາງສມອງ ແລະ ທາງຈິດໃຈ ເພື່ອ ຮ່ວມ ຢູ່ກັບສັງຄົມ ໄດ້ ຢ່າງປົກກະຕິ.

ເປົ້າໝາຍອັນສຳຄັນ ຂອງພວກເຮົາ ກໍ່ ຄືປາຖນາຢາກໃຫ້ ຄົນລາວທັງຊາດ ບໍ່ວ່າຈະເປັນ ຜູ້ໃຫຍ່ເຍົາວະຊົນ ຫຼື ເດັກນ້ອຍ ຕ້ອງໄດ້ຮັບການສົ່ງເສີມຈາກອຳນາດ ການປົກຄອງ ໃຫ້ມີການປະຕິບັດບັນດາສິດພື້ນຖານ ຢ່າງຄົບຖ້ວນ ຕາມພາຣະນ້ຳ ທີ່ຂອງຕົນ ອັນໝາຍ ຄວາມວ່າ ພາຣະໜ້າທີ່ ໃນການ ທີ່ປະເທດລາວ ກໍ່ ເປັນປະເທດນຶ່ງ ໃນບັນດາ ຫຼາຍປະເທດ ທີ່ ເປັນ ສະມາຊິກ ຂອງອົງການສະຫະປະຊາຊາດ ຢ່າງສົມບູນເຊັ່ນດຽວກັນ.

ຄະນະຈັດທຳ.

***

# ຖແລງການສາກົນ ວ່າດ້ວຍ ສິດທິມະນຸດ

ຍ້ອນຮັບຮູ້ວ່າ ການເກີດມາ ເປັນຄົນ ແມ່ນມີ ກຽດ ແລະ ມີ ສິດສເມີພາບກັນ ຈຶ່ງ ຢາກໃຫ້ມີ ອິສຣະພາບ ຄວາມຍຸຕິທັມ ແລະ ຄວາມສງົບສຸກ ຢູ່ໃນໂລກ.

ຍ້ອນເຫັນວ່າ ການບໍ່ຮັບຮູ້ ແລະມິ່ນປະມາດ ສິດທິມະນຸດ ຈຶ່ງໄດ້ມີ ການກະທັມ ແນວປ່າເຖື່ອນ. ດ້ວຍເຫດນີ້ ຄວາມໃຝ່ຝັນ ຢາກມີ ສິດປາກສິດເວົ້າ ສິດເຊື່ອຖື ສາສນາ ຢາກພົ້ນຈາກ ຄວາມຢ້ານກົວ ແລະ ຄວາມທໍຣະມານ ຈຶ່ງເປັນ ຄວາມປາຖນາ ຂອງຄົນທັງຫຼາຍ.

ຍ້ອນເຫັນວ່າ ມີຄວາມຈຳເປັນ ທີ່ ສິດທິ ມະນຸດ ຄວນຈະໄດ້ຮັບ ການປ້ອງກັນ ຈາກຣະບອບ ທີ່ ມີ ກົດໝາຍ ອັນຊອບທັມ ເພື່ອຫຼີກເວັ້ນ ການຈະຣາຈົນ ອັນເນື່ອງມາຈາກ ການກົດຂີ່ຂົ່ມເຫັງ.

ຍ້ອນ ເຫັນວ່າ ມີຄວາມສຳຄັນ ຈຶ່ງໄດ້ ສົ່ງເສີມ ໃຫ້ມີ ການສຳພັນ ທະໄມຕຼີ ຣະຫວ່າງ ນາ ໆ ຊາດ

ຍ້ອນ ເຫັນວ່າ ໃນກົດບັນຍັດ ຊະຫະປະຊາຊາດ ມີ ປະຊາກອນ ເຊື່ອໝັ້ນ ໃນສິດທິ ຂອງມະນຸດ ແລະ ຖືວ່າ ເປັນພື້ນຖານ ຂອງກຽດ. ຂອງຄຸນສົມບັດ. ຂອງສິດສເມີພາບລະຫວ່າງຊາຍ ແລະ ຍິງ ພ້ອມ ທັງ ຈະອຳນວຍຄວາມກ້າວໜ້າ ໃຫ້ ແກ່ສັງຄົມ. ຈະປັບປຸງ ຄວາມເປັນຢູ່ໃຫ້ດີຂື້ນ ແລະ ທັງ ຈະ ໃຫ້ມີ ຄວາມອິສຣະພາບ ຢ່າງກວ້າງ ຂວາງ.

ຍ້ອນ ເຫັນວ່າ ປະເທດພາຄີ ຕ່າງ ໆ ກໍ່ໃຫ້ຄຳ ໝັ້ນສັນຍາ ຮັບຮອງຮ່ວມກັນກັບສະຫະປະຊາຊາດ ວ່າ : " ຈະເຄົາຣົບ ນັບຖື ສິດທິມະນຸດ ແລະ ຄວາມອິສຣະພາບ " ດັ່ງກ່າວ.

ຍ້ອນເຫັນວ່າ ການຮັບຮູ້ ຮ່ວມກັນເປັນເງື່ອນໄຂ ສຳຄັນ ເພື່ອປະຕິບັດ ຖແລງການນີ້ ໃຫ້ໄດ້ຜົນ. ກອງປະຊຸມໃຫຍ່ສະຫະປະຊາຊາດຈຶ່ງໄດ້ປະກາດວ່າ ຖແລງການສາກົນ ວ່າດ້ວຍ ສິດທິມະນຸດ ສບັບນີ້ ເປັນຍອດ ປາຖນາຂອງປະຊາກອນ ທຸກໆ ຊາດ. ຄວນໃຫ້ແຕ່ລະຄົນ. ແຕ່ລະການຈັດຕັ້ງ ມີໄວ້ ປະຈຳໃຈ.

ຂໍໃຫ້ບາກບັ່ນ ສິດສອນຮ່ຳຮຽນ ເພື່ອ ເສີມຂຍາຍການເຄົາຣົບນັບຖື ສິດທິມະນຸດ ແລະ ຄວາມອິສຣະພາບ ພ້ອມທັງຊຸກຍູ້ໄປເທື່ອລະຂັ້ນ ໃນຣະດັບປະເທດ ແລະ ຣະດັບສາກົນ ໃຫ້ມີການຮັບຮູ້ ແລະປະຕິບັດ ຮ່ວມກັນ ຢ່າງຄົບຖ້ວນ ບໍ່ວ່າ ປະຊາຊົນ ຂອງ ປະເທດພາຄີ ຫຼື ພວກຢູ່ໃນເຂດ ອິດທິພົນ ຂອງ ມະຫາອຳນາດ.

**ມາດຕຣາ 1** : ທຸກໆ ຄົນ ທີ່ ເກີດມາ ມີ

ອິສຣະເສຣີ ແລະສເມີພາບກັນ ໃນກຽດ ແລະໃນສິດ. ຜູ້ໃດກໍ່ມີ ສະຕິປັນຍາ ສະນັ້ນ ຄວນນັບຖື ຊຶ່ງກັນ ແລະ ກັນ.

<u>ມາດຕຣາ 2</u> : ທຸກ ໆ ຄົນ ສາມາດຮຽກຮ້ອງເອົາສິດ ແລະຄວາມອິສຣະພາບ ທີ່ ປະກາດ ໄວ້ໃນຖແລງການນີ້ໄດ້ ໂດຍບໍ່ຈຳແນກ ເຊື້ອຊາດ ຜິວພັນ ເພດ ສາສນາ ແນວຄິດການ ເມືອງ ຫຼື ແນວຄິດ ອື່ນ ໆ ບໍ່ວ່າ ຈະກ່ຽວກັບ ຊາດ ກຳເນີດ. ສັງຄົມ. ຊັບສິນ. ບ່ອນ ເກີດ ຫຼື ກໍຣະນີ ອື່ນ ໆ. ອີກຍັງບໍ່ຖື ເອົາເຫດຜົນ ການເມືອງການປົກຄອງ ການເມືອງພາຍນອກ ຂອງປະເທດ ຫຼື ຂອງ ເຂດແດນ ທີ່ບຸກຄົນນັ້ນ ອາໄສຢູ່ ບໍ່ວ່າ ຈະເປັນ ເອກຣາດ ຫຼື ອາຣັກຂາ. ບໍ່ມີ ເອກສິດ ຫຼື ຢູ່ໃນຂົງເຂດຈຳກັດ ອະທິປະໄຕ.

<u>ມາດຕຣາ 3</u>: ທຸກ ໆ ຄົນ ມີສິດ ດຳລົງ ຊີວິດ ຢູ່ຢ່າງ ອິສຣະ ເສຣີ ແລະ ສງົບສຸກ.

**<u>ມາດຕຣາ 4</u>** : ບໍ່ມີບຸກຄົນໃດ ຈະ ຖືກ ບັງຄັບໃຫ້ເປັນຂ້າທາດ ຫຼື ຮັບໃຊ້ເໝືອນຂ້າທາດ. ຫ້າມບໍ່ໃຫ້ມີ ການປະຕິບັດ ລະບອບຂ້າທາດ ໃນທຸກ ຮູບການ.

**<u>ມາດຕຣາ 5</u>** : ບໍ່ມີບຸກຄົນໃດ ຈະຖືກ ທໍຣະມານ ບໍ່ວ່າ ດ້ວຍການໃສ່ໂທດ ຫຼື ການກະທັມ ອັນໂຫດຮ້າຍ ຢ່າງໄຮ້ມະນຸສທຳ ຈົນພາໃຫ້ມີການເສັຍຫາຍ.

**<u>ມາດຕຣາ 6</u>** : ຜູ້ໃດກໍ່ມີສິດ ຖືກຮັບຮູ້ ຢູ່ທຸກ ແຫ່ງຫົນ ວ່າ ມີກຽດ ແລະ ມີສິດ ເໝືອນກັນກັບ ມະນຸດ ທຸກ ໆ ຄົນ.

**<u>ມາດຕຣາ 7</u>** : ທຸກໆ ຄົນມີສິດ ສເມີພາບພາຍໃຕ້ກົດໝາຍ ແລະ ຕ້ອງໄດ້ຮັບຄວາມຄຸ້ມຄອງ ເທົ່າທຽມກັນ ຈາກກົດໝາຍ. ທຸກໆຄົນມີສິດໄດ້ຮັບການ ປົກປ້ອງ ເທົ່າທຽມກັນ ຕໍ່ ການ ກະທັມ ການ ຍຸຍົງ ໃຫ້ກະທັມ ການ ຈຳແນກ

ຜືອພັນ ຊຶ່ງຜົນ ຕໍ່ ຖແລງ ການນີ້.

<u>ມາດຕຣາ 8</u>: ທຸກ ໆ ຄົນມີສິດ ຂໍຄອາມ ເປັນທັມ ຈາກອໍານາດຕຸລາການ ຕໍ່ການລະເມີດ ສິດທິ ຂອງຕົນ ຕາມທີ່ ໄດ້ ບົ່ງໄວ້ ໃນກົດ ໝາຍ ຫຼື ຣັຖທັມມະນູນ.

<u>ມາດຕຣາ 9</u> : ບໍ່ມີ ບຸກຄົນໃດ ຈະຖືກ ຈັບ ກຸມ ຄຸມຂັງ ຫຼື ເນຣະເທດ ໂດຍໄຮ້ ເຫດຜົນ.

<u>ມາດຕຣາ 10</u> : ທຸກໆ ຄົນມີສິດ ເທົ່າທຽມ ກັນ ທີ່ຈະໄດ້ ຮັບການພິພາກສາ ຈາກສານ ຜູ້ມີອໍາ ນາດເຕັມ ຕໍ່ຂໍ້ກ່າວຫາ. ສານເປັນຜູ້ຕັດສິນ ຊີ້ບອກ ສິດ ແລະ ໜ້າທີ່ ຫຼື ມູນເຫດ ຂອງຄວາມຜິດ ໃນ ຖານ ອາຍາ.

<u>ມາດຕຣາ 11</u>: ທຸກໆ ຄົນ ທີ່ ຖືກ ຕ້ອງຫາ ກໍຍັງຖືວ່າ ເປັນຜູ້ບໍຣິສຸດຢູ່ ຈົນກວ່າ ຈະມີ ການ ຕັດສິນຈາກສານ ຢ່າງຖືກຕ້ອງ ຕາມຫຼັກ ປ້ອງກັນ ສິດ ຂອງຈໍາເລີຍ.

ບໍ່ມີບຸກຄົນໃດ ຈະຖືກ ລົງໂທດ ຍ້ອນ ການຫຼົງລືມ ຫຼືການ ກະທຳ ທີ່ບໍ່ຖື ວ່າ ເປັນ ຄວາມຜິດ ຕໍ່ກົດ ໝາຍ ຂອງຊາດຫຼື ຂອງນາ ໆຊາດ. ພາຍລຸນ ມາ ຖ້າເປັນຄວາມຜິດ ກໍ່ຈະບໍ່ໃຫ້ມີ ການ ລົງໂທດ ໜັກເກີນກວ່າໂທດທີ່ໃຊ້ປະຕິບັດກັນໃນເວລານັ້ນ

ມາດຕຣາ 12: ບໍ່ມີບຸກຄົນໃດ ຈະຖືກແຊກ ແຊງເຂົ້າ ໃນຊີວິດ ຄອບຄົວເຮືອນຊານ ແລະ ໃນ ການຕິດຕໍ່ ສ່ວນຕົວ ຫຼືຖືກຢຽບຢ່ຳ ໃນກຽດ ແລະ ຊື່ສຽງ. ທຸກໆ ຄົນ ມີສິດ ໄດ້ຮັບ ການປ້ອງກັນ ຈາກ ກົດໝາຍ ຕໍ່ການ ແຊກແຊງ ແລະ ຢຽບຢ່ຳ ດັ່ງກ່າວ.

ມາດຕຣາ 13: ທຸກໆ ຄົນມີສິດ ໄປມາ ຫຼື ເລືອກທີ່ຢູ່ຢ່າງເສຣີພາບໃນປະເທດ ທຸກໆ ຄົນ ມີ ສິດ ອອກຈາກປະເທດ ຫຼື ກັບຄືນເຂົ້າມາໃນ ປະ ເທດ ຢ່າງອິສຣະ ເສຣີ.

**ມາດຕຣາ 14** : ທຸກໆ ຄົນມີສິດ ໄປຊໍ້ລີ້ໄພແລະຖືກຕ້ອນຮັບໃນປະເທດອື່ນ.ສິດ ນີ້ຈະ ຖືກລົບລ້າງ ສຳລັບຜູ້ກະທຳ ຄວາມຜິດ ຢ່າງປະຈັກຕາໃນທາງອາຍາ ຫຼື ຜູ້ທີ່ຜ່າຝືນ ຕໍ່ຫຼັກການ ແລະແນວທາງ ຂອງ ສະຫະ ປະຊາຊາດ .

**ມາດຕຣາ 15** : ທຸກໆ ຄົນມີສິດ ຖືສັນຊາດນຶ່ງ. ບໍ່ມີ ບຸກຄົນໃດ ຈະ ຖືກແຍ້ງ ປົດສັນຊາດ ຫຼືຖືກ ຫວງຫ້າມ ບໍ່ ໃຫ້ ປ່ຽນສັນຊາດ.

**ມາດຕຣາ 16**: ພໍເຖິງ ອາຍຸແຕ່ງງານ ຊາຍ ຫຼື ຍິງ ໂດຍບໍ່ ຈຳກັດ ເຜົ່າພັນ ສັນຊາດ ຫຼື ສາດສະໜາ ມີສິດ ແຕ່ງງານ ແລະ ສ້າງຄອບຄົວໄດ້ສອງຝ່ອເມັຽ ມີສິດ ເທົ່າທຽມກັນ ທັງໃນເວລາ ຢູ່ຮ່ວມກັນ ຫຼື ໃນກໍຣະນີ ຢ່າຮ້າງກັນ.

ການແຕ່ງງານ ຕ້ອງໃຫ້ ມາຈາກ ການ ຕົກລົງ ແລະ ພໍໃຈ ຂອງບ່າວສາວ.

ຄອບຄົວ ແມ່ນ ຫຼັກແຫຼ່ງ ແລະ ພື້ນຖານ ຂອງສັງຄົມ ສົມຄວນ ທີ່ຈະ ໄດ້ຮັບ ການຄຸ້ມຄອງ ຈາກສັງຄົມ ແລະ ຣັດ.

**<u>ມາດຕຣາ 17</u>**: ທຸກ ໆ ຄົນ ບໍ່ວ່າ ຈະຢູ່ຄົນດຽວ ຫຼື ຮ່ວມໝູ່ ມີສິດ ເປັນເຈົ້າຂອງຊັບ ບໍ່ມີ ບຸກຄົນໃດ ທີ່ ຈະ ຖືກ ແຍ້ງຕັດສິດ ໃນ ການເປັນເຈົ້າຂອງຊັບ.

**<u>ມາດຕຣາ 18</u>**: ທຸກ ໆ ຄົນ ມີສິດອິສຣະພາບ ໃນການຄິດ ໃນການເຊື່ອຖື ແລະ ປະຕິບັດສາສນາ. ສິດນີ້ ໝາຍເຖິງ ການມີ ອິສຣະ ໃນການປ່ຽນສາສນາ ຫຼື ເຊື່ອໝັ້ນ. ແລະໃນການກະທຳ ພິທີ ທາງສາສນາ ຫຼື ຄວາມເຊື່ອໝັ້ນຈະເປັນຄົນດຽວ ຫຼື ຮ່ວມໝູ່ ໃນ ສາທາຣະນະ ຫຼື ສຖານທີ່ ພິເສດ ດ້ວຍການສິດສອນ ການ ສັກກາຣະບູຊາ ຫຼື ການ ປະຕິບັດ ຮີດຄອງ.

**<u>ມາດຕຣາ 19</u>** : ທຸກ ໆ ຄົນ ມີສິດ ອິສຣະ

ພາຍ ໃນການອອກຄວາມຄິດເຫັນ ແລະ ສແດງ ຄວາມຮູ້ສຶກຂອງຕົນ ຕລອດທັງສິດອິສຣະພາບໃນ ການສແວງຫາ ການເກັບກຳ ການເຜີຍແຜ່ ໂດຍ ບໍ່ ຈຳກັດ ເຂດແດນ ແລະ ສິດເສຣີພາບ ໃນການ ເອົາຄວາມຄິດເຫັນ ຂອງຕົນ ອອກເປັນຂ່າວ ບໍ່ວ່າ ດ້ວຍວິທີໃດ.

<u>ມາດຕຣາ 20</u> : ທຸກໆ ຄົນ ມີສິດ ເສຣີພາບ ໃນການຮ່ວມຊຸມນຸມ ແລະ ຈັດຕັ້ງສະມາຄົມ ທີ່ບໍ່ ສ້າງ ຄວາມເດືອດຮ້ອນໃຫ້ແກ່ ສັງຄົມ. ບໍ່ມີບຸກ ຄົນໃດ ທີ່ ຈະຖືກບັງຄັບ ໃຫ້ເຂົ້າ ສັງກັດ ຢູ່ ໃນ ສະມາຄົມໃດ ສະມາຄົມ ນຶ່ງ ໂດຍທາງກົງ ຫຼື ທາງ ອ້ອມ.

<u>ມາດຕຣາ 21</u>: ທຸກໆ ຄົນມີສິດເຂົ້າ ຮ່ວມ ກິດຈະການ ບໍຣິຫານ ປະເທດ ດ້ວຍ ຕົນເອງ ຫຼື ດ້ວຍຄົນອື່ນຊຶ່ງຕົນໄດ້ຄັດເລືອກຢ່າງອິສຣະ ເສຣີ.

ທຸກໆຄົນ ມີສິດ ເທົ່າທຽມກັນ ໃນການສະໝັກຮັບ ໜ້າທີ່ ໃນອົງການ ການປົກຄອງ ຂອງຣັດ ພາຍ ໃນ ປະເທດ ຂອງຕົນ.

ຄວາມປາຖນາ ຂອງປະຊາຊົນ ເປັນພື້ນຖານ ຂອງ ອຳນາດ ການປົກຄອງ. ຄວາມປາຖນາດັ່ງກ່າວ ຕ້ອງ ໃຫ້ສແດງອອກ ໃນການເລືອກຕັ້ງ ຢ່າງຍຸຕິ ທັມທົ່ວໄປ ທີ່ມີຂຶ້ນເປັນປົກຕິ ດ້ວຍການລົງ ຄະ ແນນສຽງ ທາງລັບ ຫຼື ດ້ວຍວິທີ ອື່ນ ທີ່ສາມາດ ຮັບປະກັນ ຄວາມເສຣີພາບ ໃນ ການລົງມະຕິ.

<u>ມາດຕຣາ 22</u>: ທຸກໆ ຄົນ ທີ່ສັງກັດ ຢູ່ໃນ ສັງຄົມມະນຸດ ມີສິດ ໄດ້ຮັບການຊ່ວຍເຫຼືອຈາກ ອົງການ ສັງຄົມສົງເຄາະ. ອົງການນີ້ຕັ້ງຂຶ້ນ ເພື່ອ ແກ້ໄຂ ບັນຫາເສຖກິດ ສັງຄົມ ແລະ ວັທນະທັມ ອັນຈຳເປັນ ທີ່ສອດຄ່ອງ ກັບສັກສີ ແລະ ການ ຈະ ເຣີນ ເຕີບໂຕ ຂອງບຸກຄົນ ໂດຍອາໄສ ການ ຮ່ວມມື ຂອງຄົນທັງຊາດ ແລະ ຂອງ ສາກົນ ອີງ

ຕາມການຈັດຕັ້ງແລະລາຍໄດ້ຂອງແຕ່ລະປະເທດ.

<u>**ມາດຕຣາ 23**</u> : ທຸກໆ ຄົນນິສິດ ໄດ້ເຮັດການ ຊຶ່ງຕົນໄດ້ເລືອກເອງຢ່າງອິສຣະພ້ອມທັງ ພໍໃຈ ໃນເງື່ອນໄຂຕ່າງໆ ແລະທັງນິສິດ ໄດ້ຮັບການຊ່ອຍເຫຼືອ ເມື່ອຍາມອ່າງງານ.

ທຸກ ໆ ຄົນນິສິດໄດ້ຮັບເງິນ ສິນຈ້າງ ສົມກັບແຮງ ຂອງຕົນ ໂດຍບໍ່ ມີການຈຳແນກ ໃດ ໆ.

ຜູ້ທຳງານ ນິສິດໄດ້ ເງິນສິນຈ້າງ ອັນເໝາະສົມ ແລະ ເປັນ ທີ່ ພໍ ໃຈ ເພື່ອ ໃຫ້ ລ້ຽງ ຄອບຄົວ ຢ່າງ ສົມກຽດ ແລະ ຍັງ ນິສິດ ໄດ້ຮັບເງິນ ເພີ້ມ ໃນຄາວ ຈຳເປັນ ຈາກ ອົງ ການ ສັງຄົມ ສົງເຄາະ.

ທຸກໆຄົນ ນິສິດ ຢ່າງອິສຣະ ຮ່ອມກັບໝູ່ຈັດຕັ້ງ ສະມາຄົມອາຊີບ ຂຶ້ນ ແລະໂຮມ ເຂົ້າເປັນ ສະຫະພັນ ເພື່ອປ້ອງກັນຜົນປະໂຍດຂອງຕົນ.

<u>**ມາດຕຣາ 24**</u> : ຜູ້ ທຳ ງານ ທຸກ ໆ ຄົນ ນິ

ສິດໄດ້ ພັກຜ່ອນ ຢ່ອນອາລົມ ສົມກັບກຳນົດເວລາ ທຳງານ ແລະ ທັງມີສິດ ໄດ້ພັກການເປັນຄັ້ງເປັນຄາວ ພ້ອມກັບໄດ້ຮັບເງິນເດືອນ ຕາມປົກກະຕິ.

ມາດຕາ 25 : ທຸກໆ ຄົນ ມີສິດ ໄດ້ ຮັບເງິນຄ່າຄອງຊີບ ພຽງພໍ ເພື່ອຮັກສາສຸຂະພາບ ແລະ ຊີວິດ ການເປັນຢູ່ ຂອງຕົນ ແລະ ຄອບຄົວ ໂດຍສະເພາະ ໃນດ້ານອາຫານ, ເຄື່ອງນຸ່ງ, ທີ່ພັກອາໄສ, ຢາປົວພະຍາດ ແລະ ກິຈການສັງຄົມ ອັນຈຳເປັນ, ພ້ອມທັງ ມີສິດ ໄດ້ຮັບ ການຊ່ວຍ ເຫຼືອເມື່ອຍາມ ວ່າງງານ, ເຈັບປ່ວຍ, ເສັຽອົງຄະ, ເປັນໝ້າຍ, ແກ່ຊະລາ ຫຼື ຍາມຂາດລາຍໄດ້ ຊຶ່ງ ບໍ່ ຂຶ້ນກັບຄວາມຕັ້ງໃຈ ຂອງຕົນ. ໃນຍາມຄອດບຸດ ແລະ ລ້ຽງເດັກ ແມ່ ມີສິດ ໄດ້ຮັບການຊ່ວຍເຫຼືອ ແລະ ເອົາໃຈໃສ່ ເປັນພິເສດ.

ມາດຕາ 26 : ທຸກໆ ຄົນ ມີສິດ ໄດ້ ຮັບການ ສຶກສາ ໂດຍ ບໍ່ໃຫ້ ເສັຽຄ່າຈ້າງ ຢ່າງ ນ້ອຍ

ໃນຊັ້ນປະຖົມ. ເດັກທຸກຄົນ ຕ້ອງໃຫ້ໄດ້ ເຂົ້າຮຽນຊັ້ນປະຖົມ ອັນເປັນພື້ນຖານ ຂອງການ ສຶກສາ ການສຶກສາເຕັກນິກ ແລະ ວິຊາຊີບ ຕ້ອງເປີດໃຫ້ ຮຽນໄດ້ທົ່ວໄປ. ການສຶກສາຊັ້ນສູງຕ້ອງເປີດໂອກາດ ໃຫ້ແກ່ທຸກໆ ຄົນທີ່ມີຣະດັບຄວາມສາມາດ ການສຶກສາຕ້ອງແນໃສ່ການສ້າງຄົນ ໃຫ້ ມີຄວາມຈເຣີນ ກ້າວໜ້າພ້ອມທັງທະວີການນັບຖືສິດທິ ມະນຸດ ແລະ ສິດເສຣີພາບ. ການສຶກສາຍັງຕ້ອງ ສົ່ງເສີມໃຫ້ມີຄວາມເມດຕາ ກະຣຸນາ ແລະຄວາມຮັກແພງ ຣະຫວ່າງຫລາຍຊາດ ຫລາຍເຜົ່າ ຫລາຍສາສນາ ຕລອດທັງການເສີມຂຍາຍ ວຽກງານຂອງສະຫະປະຊາຊາດ ເພື່ອປົກປັກຮັກສາ ສັນຕິພາບ ຢູ່ໃນໂລກ.

ພໍ່ແມ່ ມີສິດ ກ່ອນຄົນອື່ນ ໃນການເລືອກ ໃຫ້ແກ່ລູກຂອງ ຕົນ.

**<u>ມາດຕຣາ 27</u>** : ທຸກໆ ຄົນ ມີສິດ ເຂົ້າ

ຮ່ວມນຳໝູ່ ຢ່າງອິສຣະ ໃນວົງການສິລປະກັມ ວັຕທະນະທັມ ແລະ ວິທຍາສາດ ອັນກ້າວໜ້າ ພ້ອມທັງຊື່ນຊົມ ຍິນດີ ໃນຜົນປະໂຍດທີ່ຕາມມາ.

ທຸກຄົນມີສິດ ໄດ້ຮັບການປ້ອງກັນຜົນປະໂຍດທາງດ້ານຊື່ສຽງ ແລະ ວັຕຖຸຂອງຜົນງານ ສິລປະກັມ ວັນນະກັມ ແລະວິທຍາສາດ ຊຶ່ງຕົນໄດ້ສ້າງຂື້ນ.

<u>ມາດຣາ 28</u> : ທຸກ ໆ ຄົນມີສິດ ຕິດຕາມ ສະພາບການ ທາງດ້ານສັງຄົມ ແລະ ດ້ານສາກົນ. ທີ່ພາໃຫ້ ສິດທິ ມະນຸດ ແລະສິດອິສຣະພາບ ຊຶ່ງກຳນົດໄວ້ ໃນນີ້ ໄດ້ຮັບຜົນເຕັມເມັດ ເຕັມໜ່ວຍ.

<u>ມາດຣາ 29</u>: ທຸກໆ ຄົນມີພາຣະນ້າທີ່ຕໍ່ສັງຄົມ ອັນຈະພາໃຫ້ອະນາຄົດຂອງຕົນ ຈະເຣີນຮຸ່ງເຮືອງ ການໃຊ້ສິດ ແລະຜົນປະໂຍດຂອງຄວາມ ອິສຣະພາບນີ້ ທຸກຄົນຕ້ອງຢູ່ໃນຂອບເຂດທີ່ກົດໝາຍ ກຳ

ນິດໃວ້ ໂດຍສະເພາະ ໃນເດ້ານ ການ ນັບຖື ສິດທິ ຂອງຄົນອື່ນ ເພື່ອຮັກສາໃວ້ ຊຶ່ງ ຄວາມ ຢູ່ເຢັນເປັນ ສຸກ ແລະ ຄວາມເປັນ ຣະບຽບ ຮຽບຮ້ອຍ ຂອງ ສັງຄົມ ຕາມ ຫຼັກ ປະຊາທິປະໄຕ.

ການໃຊ້ສິດ ແລະ ຄວາມອິສຣະພາບ ດັ່ງກ່າວ ຈະຕ້ອງໃຫ້ສອດຄ່ອງ ກັບຈຸດປະສົງ ແລະ ຫຼັກການ ຂອງ ສະຫະປະຊາຊາດ.

<u>**ມາດຕຣາ 30**</u> : ບໍ່ມີ ບັນຍັດ ຂໍ້ໃດ ໃນ ຖແລງ ການນີ້ ພໍຈະ ໃຫ້ເຂົ້າ ໃຈວ່າ ໄດ້ອະນຸຍາດໃຫ້ຣັດ ນຶ່ງ. ຄົນຫມູ່ນຶ່ງ ຫຼື ບຸກຄົນນຶ່ງ ຖືເອົາເປັນ ສິດໃດ ສິດນຶ່ງ ມາທຳລາຍ ຫຼື ລົບລ້າງ ສິດ ແລະ ອິສຣະ ພາບ ທີ່ ບົ່ງໃວ້ ໃນ ຖແລງການນີ້.

ອົງການ ສະຫະປະຊາຊາດ

ວັນທີ 10 ທັນວາ 1948

ແປເປັນພາສາລາວ ຈາກ

ສບັບຕົ້ນຊຶ່ງເປັນພາສາຝຼັ່ງເສດ

***

ຖແລງການສາກົນ ວ່າດ້ວຍ ສິດທິຂອງເດັກ.

**ມາດຕຣາ 1** : ເດັກຄວນໄດ້ຮັບ ສິດທິ ເທົ່າ ທຽມກັນ ໂດຍປາສຈາກ ການແບ່ງແຍກ ແລະກີດ ກັນ ບໍ່ວ່າກໍຣະນີໃດໆ ໃນເຣື້ອງເຊື້ອຊາດ ຜິວ ເພດ ພາສາ ແລະ ສາສນາ ຄວາມຄິດເຫັນ ທາງ ການເມືອງ ເຜົ່າພັນແຫ່ງຊາດ ຫຼື ສັງຄົມ ຊັບສິນກຳເນີດ ຫຼື ສະພາບ ການອື່ນ ໆ. ບໍ່ວ່າ ຈະ ເປັນ ຂອງ ເດັກ ຫຼື ຂອງຄອບຄົວ ກໍ່ຕາມ.

**ມາດຕຣາ 2**: ເດັກຕ້ອງໄດ້ ຮັບ ການພິທັກ ແລະ ຄຸ້ມຄອງ ເປັນ ພິເສດອັນ ຈະ ຊ່ວຍໃຫ້ເດັກ ສາມາດ ພັທນາ ທາງກາຍ ທາງສມອງ ແລະ ຈິດ ໃຈ ເພື່ອຮ່ວມຢູ່ໃນສັງຄົມ ໄດ້ຢ່າງປົກກະຕິ.

**ມາດຕຣາ 3** : ເດັກມີສິດທິ ທີ່ຈະ ມີ ຊື່ ແລະ ມີ ສັນຊາດກຳເນີດ.

**ມາດຕຣາ 4** : ເດັກຕ້ອງ ໄດ້ ຮັບ ຄວາມ

ໝັ້ນຄົງ ທາງສັງຄົມ ແລະ ເຕີບໃຫຍ່ຢ່າງສົມບູນ ດັ່ງ ນັ້ນ ແມ່ ແລະ ເດັກຄວນໄດ້ຮັບການເບິ່ງແຍງ ແລະ ຄຸ້ມ ຄອງເປັນພິເສດ ທັງເມື່ອຢູ່ໃນທ້ອງແມ່ ແລະ ພາຍ ຫຼັງຄອດແລ້ວ ໂດຍໄດ້ຮັບສິດທິໃນ ເຮືອນທີ່ຢູ່ ອາໃສ ໄດ້ຮັບອາຫານໄດ້ຮັບການເບິ່ງ ແຍງ ທາງ ການແພດ ໂດຍ ສະເພາະ ເດັກນ້ອຍ ຕ້ອງໄດ້ ມີການ ຫຼິ້ນ ລື້ນເລີງ ເພີດເພີນໃຈ ດ້ວຍ.

<u>ມາດຕາ 5</u>: ເດັກທີ່ພິການຮ່າງກາຍ ສົມອງແລະຈິດໃຈ ມີສິດທີ່ຈະໄດ້ຮັບການຮັກສາ ປິ່ນປົວ ເປັນພິ ເສດ ໝາຍເຖິງ ການ ເບິ່ງ ແຍງ ແລະ ຮັກສາ. ແລະ ການສຶກສາທີ່ ເໝາະສົມ ກັບສະພາບ ຂອງເດັກໂດຍ ສະເພາະ.

<u>ມາດຕາ 6</u> : ເດັກຕ້ອງໄດ້ຮັບ ຄວາມຮັກ ຄວາມ ເຂົ້າໃຈ ອັນຈະຊ່ວຍ ໃນການ ພັທນາ ບຸກຄະລິກ ຂອງ ເດັກເອງ ແລະ ເຕີບໃຫຍ່ ຊ່າຍ ໄດ້ ພາຍໃຕ້ການ

ດູແລ ແລະ ຮັບ ຜິດຊອບຂອງບິດາ ມານດາ ຂອງ ເດັກເອງ ແລະ ໃນທຸກກໍລະນີ ເດັກຈະຕ້ອງ ຢູ່ ໃນ ບັນຍາກາດ ທີ່ເຕັມ ໄປດ້ວຍຄວາມຮັກ ຄວາມອົບອຸ່ນປອດໄພ ແລະບໍ່ພັດພາກ ຈາກພໍ່ແມ່ໃນກໍລະນີທີ່ເດັກບໍ່ມີຄອບຄົວຫຼືມາຈາກ ຄອບຄົວທີ່ຍາກຈົນ ແລະມີລູກຫຼາຍ ຈະໄດ້ຮັບການ ຊ່ວຍເຫຼືອ ເປັນພິເສດຈາກລັດ ຫຼື ຈາກອົງການ ຕ່າງ ໆ.

ມາດຕຣາ 7 : ເດັກ ມີສິດທິ ທີ່ຈະໄດ້ຮັບການສຶກສາ ຊຶ່ງລັດຖະບານຄວນຈະຈັດໃຫ້ເຂົາຢ່າງນ້ອຍໃນຂັ້ນປະຖົມສຶກສາ ເພື່ອ ເປັນການ ສົ່ງເສີມ ອັທນະທັມ ໂດຍ ທົ່ວໄປ ແລະ ໃຫ້ເດັກເຕີບໃຫຍ່ເປັນສະມາຊິກຜູ້ສ້າງ ປະໂຍດ ໃຫ້ສັງຄົມຄົນນຶ່ງ ການສຶກສານີ້ ຄວນ ໄປເຖິງ ການ ແນະນໍາແນວທາງ ຊີວິດ ຊຶ່ງມີ ບິດາ ມານດາ ເປັນ ຜູ້ຮັບຜິດຊອບກ່ອນບຸກຄົນອື່ນ ໆ. ເດັກຈະຕ້ອງ ມີໂອກາດໄດ້ຮັບຄວາມສະນຸກ ເພີດເພີນຈາກ ການ ຫຼິ້ນ

ແລະນອນຊື່ນ ພ້ອມກັນໄປດ້ວຍ.

**ມາດຕາ 8** : ເດັກເປັນບຸກຄົນທຳອິດທີ່ໄດ້ຮັບການຄຸ້ມຄອງແລະສົງເຄາະ ໃນທຸກກໍລະນີ

**ມາດຕາ 9** : ເດັກ ຕ້ອງໄດ້ ຮັບການປົກປ້ອງ ໃຫ້ພົ້ນຈາກ ການ ຖືກປະຖິ້ມ ພົ້ນຈາກຄວາມໂຫດຮ້າຍທາລຸນ ແລະການຖືກຂົ່ມເຫັງເຄັ່ງເດັກທຸກຊະນິດ ເດັກຈະຕ້ອງ ບໍ່ກາຍເປັນສິນຄ້າ ບໍ່ວ່າ ໃນຮູບ ໃດ ຈະຕ້ອງບໍ່ມີ ການຮັບເດັກ ເຂົ້າເຮັດການກ່ອນໄວອັນເສີມຄວນ ບໍ່ມີ ການກະທຳ ໃດ ໆ ອັນຈະເປັນເຄື່ອງຖ່ວງດຶງຫຼືບັງຄັບເດັກໃຫ້ຈຳຕ້ອງຮັບຈ້າງເຮັດວຽກການ ຊຶ່ງອາດເປັນພິດຮ້າຍ ຕໍ່ສຸຂະພາບເດັກ ຫຼືເປັນເຫດໃຫ້ການເຕີບໃຫຍ່ ຂະຫຍາຍ ຄື ທາງຮ່າງກາຍ ທາງມັນສະໝອງ ແລະຈິດໃຈຂອງເດັກຕ້ອງເສື່ອມລົງ.

**ມາດຕາ 10** : ເດັກຄວນ ໄດ້ຮັບຄວາມຄຸ້ມ ຄອງ ໃຫ້ພົ້ນ ຈາກ ການກະທຳ ທີ່ ສະແດງ

ອອກເຖິງ ການກີດກັນ ແບ່ງ ແຍກ ບໍ່ວ່າເຊື້ອຊາດ ສາສນາ ຫຼື ໃນຮູບໃດໆ ເດັກຈະຕ້ອງໄດ້ຮັບການ ລ້ຽງໃຫ້ເຕີບໃຫ່ຍຕື່ນຂຶ້ນມາໃນພາວະແຫ່ງຈິດໃຈ ທີ່ເຕັມໄປດ້ວຍ ຄວາມເຂົ້າອົກເຂົ້າໃຈ ແລະມີການ ຜ່ອນໜັກ ຜ່ອນເບົາ ມິດຕະພາບ ລະຫວ່າງ ຊົນ ຊາດຕ່າງໆ ສັນຕິພາບ ແລະຄວາມເປັນ ພີ່ນ້ອງກັນ ທາງສາກົນ ແລະດ້ວຍ ຄວາມສຳນຶກເຕັມທີ່ວ່າ ພະ ລະກຳລັງ ແລະ ຄວາມສາມາດພິເສດ ໃນຕົວຄອນ ຈະອຸທິດ ເພື່ອຮັບໃຊ້ເພື່ອນ ມະນຸດ ດ້ວຍກັນ.

ສະມັດຊາ ສະຫະປະຊາຊາດ ປະກາດ
ເມື່ອ ວັນທີ 20 ພຶດສະຈິກາ 1949

***